ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 2501 /ອຄ.ຄພນ

ນະຄອນຫລວງວຽງຈັນ, ວັນທີ 16 DEC 2015

# ຄໍາສັ່ງ
## ຂອງລັດຖະມົນຕີວ່າການ
## ກ່ຽວກັບການຕິດສະຫຼາກສິນຄ້າ ເປັນພາສາລາວ

ເຖິງ: ທ່ານ ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010.
- ອີງຕາມດໍາລັດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ, ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ ປີ 2011.
- ອີງຕາມຂໍ້ຕົກລົງວ່າດ້ວຍອີງການຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ, ສະບັບເລກທີ 1746/ອຄ.ຄພນ, ລົງວັນທີ 23 ສິງຫາ 2012.

ເພື່ອຜັນຂະຫຍາຍ ເນື້ອໃນຂອງ ມາດຕາ 18, 19, 20, 60 ແລະ 61 ຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010 ໃຫ້ເປັນອັນລະອຽດ ເຮັດໃຫ້ຜູ້ຈັດຕັ້ງປະຕິບັດ ຢູ່ຂັ້ນທ້ອງຖິ່ນ ເຂົ້າໃຈແຈ້ງກ່ຽວກັບພາລະບົດບາດຂອງຕົນ ໃນວຽກງານການຄຸ້ມຄອງ ແລະ ຕິດຕາມການຕິດສະຫຼາກສິນຄ້າເປັນພາສາລາວ, ແນໃສ່ເຮັດໃຫ້ຜູ້ຜະລິດຢູ່ພາຍໃນ ແລະນໍາເຂົ້າຈາກຕ່າງປະເທດ ຕ້ອງຕິດສະຫຼາກເປັນພາສາລາວກ່ອນຈຶ່ງຈໍາໜ່າຍ, ເພື່ອໃຫ້ຜູ້ຊົມໃຊ້ເຂົ້າໃຈກ່ຽວກັບຊັບພະຄຸນ ແລະ ຄຸນນະພາບຂອງສິນຄ້າ ກ່ອນຈະເລືອກຊື້ ແລະ ຊົມໃຊ້ເພື່ອຫຼີກລ້ຽງການຊົມໃຊ້ສິນຄ້າທີ່ບໍ່ໄດ້ຄຸນນະພາບ, ເສຍຄຸນ ຫຼື ຊັບພະຄຸນ ບໍ່ຖືກຕ້ອງຕາມຈຸດປະສົງຂອງຜູ້ຊົມໃຊ້, ປ້ອງກັນບໍ່ໃຫ້ມີ ຜົນກະທົບທີ່ບໍ່ດີ ຕໍ່ສຸຂະພາບ, ຊັບສິນ ຂອງຜູ້ຊົມໃຊ້ ແລະ ສິ່ງແວດລ້ອມ.

ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ ອອກຄໍາສັ່ງດັ່ງນີ້:

1. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ສົມທົບກັບຫ້ອງການອຸດສາຫະກໍາ ແລະການຄ້າເມືອງພາຍໃນແຂວງ, ນະຄອນຫຼວງຂອງຕົນລົງເຜີຍແຜ່ ແລະ ແນະນໍາໃຫ້ຜູ້ຜະລິດ, ຜູ້ນໍາເຂົ້າ, ຜູ້ຂາຍຍົກແລະຂາຍຍ່ອຍສິນຄ້າ ໃຫ້ຕິດສະຫຼາກສິນຄ້າເປັນພາສາລາວຄືດັ່ງນີ້:

1) ຜູ້ຜະລິດ, ຜູ້ປະກອບ, ປຸງແຕ່ງ, ຫຸ້ມຫໍ່ ສິນຄ້າຢູ່ ສປປ ລາວ,ຜູ້ນຳເຂົ້າ ແລະ ຈຳໜ່າຍສິນຄ້າທີ່ຂຶ້ນທະບຽນວິສາຫະກິດ ການຄ້າຂາຍຍົກ ຫຼື ເປັນຕົວແທນຈຳໜ່າຍສິນຄ້າໃດໜຶ່ງຕ້ອງຕິດສະຫຼາກສິນຄ້າເປັນພາສາລາວກ່ອນຈຶ່ງຈຳໜ່າຍໃຫ້ຜູ້ຊົມໃຊ້ ຫຼື ສະໜອງໃຫ້ຜູ້ຂາຍຍ່ອຍ. ຖ້າເຈົ້າໜ້າທີ່ກວດກາການຄ້າພົບເຫັນ ສິນຄ້າທີ່ສະໜອງນັ້ນບໍ່ໄດ້ຕິດສະຫຼາກເປັນພາສາລາວ ຈະຖືກກ່າວເຕືອນ, ປັບໃໝ, ໃຫ້ໂຈະ ຫຼື ຖອນໃບທະບຽນວິສາຫະກິດ.

2) ຜູ້ດຳເນີນທຸລະກິດການຄ້າຂາຍຍ່ອຍ:ການຮັບເອົາສິນຄ້າມາຈຳໜ່າຍ ໃຫ້ຮັບເອົາສິນຄ້າທີ່ຕິດສະຫຼາກທີ່ເປັນພາສາລາວເທົ່ານັ້ນ. ພ້ອມນີ້ ກໍ່ຕ້ອງວາງຂາຍສິນຄ້າ ທີ່ໄດ້ຕິດສະຫຼາກເປັນພາສາລາວ. ຖ້າເຈົ້າໜ້າທີ່ກວດກາການຄ້າພົບເຫັນສິນຄ້າທີ່ວາງຂາຍບໍ່ໄດ້ຕິດສະຫຼາກເປັນພາສາລາວ ຈະຖືກກ່າວເຕືອນ, ປັບໃໝ, ຍຶດ ຫຼື ອາຍັດສິນຄ້າດັ່ງກ່າວ.

3) ສຳລັບສິນຄ້າທີ່ໄດ້ຜະລິດ ຫລື ນຳເຂົ້າມາຈຳໜ່າຍ ກ່ອນປະກາດໃຊ້ຄຳສັ່ງສະບັບນີ້ ຜູ້ຂາຍຍ່ອຍຕ້ອງປະສານເອົາສະຫຼາກທີ່ເປັນພາສາລາວ ນຳຜູ້ທີ່ສະໜອງສິນຄ້າໃຫ້ຕົນ. ຖ້າຜູ້ສະໜອງສິນຄ້າ ບໍ່ສາມາດຈັດພິມໃຫ້ໄດ້ ແມ່ນພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ ຈະສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງລົງໄປກວດກາ ແລະ ບັນທຶກສິນຄ້າດັ່ງກ່າວ. ຫຼັງຈາກນັ້ນ ຈະຕິດຕາມການຈຳໜ່າຍເປັນແຕ່ລະໄລຍະຈົນກວ່າຈະຈຳໜ່າຍສິນຄ້າເຫຼົ່ານັ້ນໝົດໄປ.

2. ເນື້ອໃນຂອງສະຫຼາກ ຕ້ອງປະກອບມີເນື້ອໃນຕົ້ນຕໍຕາມທີ່ກຳນົດໃນມາດຕາ 19 ຂອງກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010 ຄືດັ່ງນີ້:

   1) ປະເພດ ຫຼື ຊະນິດສິນຄ້າ;
   2) ເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນຂອງຜູ້ຜະລິດ ແລະ ຜູ້ນຳເຂົ້າ ເພື່ອຈຳໜ່າຍ;
   3) ສະຖານທີ່ຜະລິດ ແລະ ຜູ້ນຳເຂົ້າເພື່ອຈຳໜ່າຍ, ຊື່ປະເທດຜະລິດສິນຄ້າ;
   4) ລາຄາ, ຈຳນວນ, ປະລິມານ, ຄຸນນະພາບ, ບໍລິມາດ, ສ່ວນປະກອບທີ່ກຳນົດແຈ້ງອັດຕາສ່ວນປະກອບ,ຂໍ້ແນະນຳວິທີນຳໃຊ້, ຄຳເຕືອນ, ວັນເດືອນປີຜະລິດ ແລະ ວັນໝົດອາຍຸນຳໃຊ້.

3. ການຕິດສະຫຼາກຕ້ອງຕິດໃຫ້ແໜ້ນ, ຕິດຢູ່ບ່ອນເຫັນໄດ້ງ່າຍ ແລະ ຕ້ອງຕິດໃສ່ທັງສິນຄ້າ ແລະ ຫີບຫໍ່ ຫຼືສິ່ງບັນຈຸຕ່າງໆ. ສິນຄ້ານຳເຂົ້າຈາກຕ່າງປະເທດ ເນື້ອໃນຂອງສະຫຼາກທີ່ເປັນພາສາລາວ ຕ້ອງຖືກກັບເນື້ອໃນຂອງສະຫຼາກທີ່ເປັນພາສາຕ່າງປະເທດ.

4. ສິນຄ້າທີ່ຖືກຍົກເວັ້ນ ການຕິດສະຫຼາກຕາມທີ່ກຳນົດໃນຄຳສັ່ງສະບັບນີ້ ມີຄືດັ່ງນີ້:

   1) ສິນຄ້າທີ່ນຳເຂົ້າຊົ່ວຄາວເພື່ອສົ່ງອອກຕໍ່, ສິນຄ້ານຳເຂົ້າຊົ່ວຄາວ ເພື່ອວາງສະແດງໃນງານຕະຫຼາດນັດ ຫຼັງຈາກນັ້ນສົ່ງອອກຄືນ, ສິນຄ້າຜ່ານແດນ;
   2) ຂອງຂວັນ ແລະ ຂອງຕ້ອນ;
   3) ສິນຄ້າທີ່ເປັນສະບຽງອາຫານສົດ, ສະບຽງອາຫານທີ່ປຸງແຕ່ງ ແຕ່ບໍ່ມີການຫຸ້ມຫໍ່ ແລະ ຂາຍໂດຍກົງໃຫ້ຜູ້ຊົມໃຊ້;
   4) ສິນຄ້າທີ່ເປັນວັດຖຸດິບ ທີ່ບໍ່ມີການຫຸ້ມຫໍ່ ນຳເຂົ້າເພື່ອສະໜອງໃຫ້ການຜະລິດໃນໂຮງງານ ຫຼື ການ ກໍ່ສ້າງ.

5. ການປະຕິບັດມາດຕະການຕໍ່ທີ່ຜູ້ລະເມີດ ຕໍ່ຄຳສັ່ງສະບັບນີ້ ໃຫ້ປະຕິບັດມາດຕະການຄືດັ່ງນີ້:

   1) ຄັ້ງທີໜຶ່ງໃຫ້ຕັກເຕືອນ ແລະ ເຮັດບົດບັນທຶກເຊັນຮັບຮູ້ການລະເມີດ;